ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 202 /ກຄສງ.

ນະຄອນຫລວງວຽງຈັນ, ວັນທີ 19 ມິຖຸນາ 2017.

ຫ້ອງການ ຄຄຊ
ເລກທີ 0647
ວັນທີ 20 JUN 2017
ໂທລະສັບ 021 217770

## ສະໂນດນຳສົ່ງ

**ຮຽນ:** ບັນດາກົມ ແລະ ທຽບເທົ່າກົມ ພາຍໃນທະນາຄານແຫ່ງ ສປປ ລາວ ທີ່ນັບຖື,

**ເລື່ອງ:** ນຳສົ່ງເອກະສານ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງສະຖາບັນການເງິນ ສະບັບເລກທີ 1041/ທຫລ, ລົງວັນທີ 25/11/2016.

ກົມຄຸ້ມຄອງສະຖາບັນການເງິນ ຂໍຖືເປັນກຽດຮຽນມາຍັງທ່ານ ເພື່ອຂໍນຳສົ່ງເອກະສານ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

| ລ/ດ | ເນື້ອໃນ | ຈຳນວນ | ໝາຍເຫດ |
|---|---|---|---|
| 01 | ເອກະສານ ຂໍ້ຕົກລົງວ່າດ້ວຍການແບ່ງຄວາມຮັບຜິດຊອບຂອງ ຄະນະກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 09/ກຄສງ, ລົງວັນທີ 16/06/2017. | 01 ຊຸດ | **ເພື່ອຊາບ** |

ດັ່ງນັ້ນ, ຈຶ່ງຂໍຮຽນນຳສົ່ງມາຍັງທ່ານ ເພື່ອຊາບ ແລະ ມີຂໍທິດຊີ້ນຳໃນການຈັດຕັ້ງປະຕິບັດ.

ດ້ວຍຄວາມນັບຖື,

**ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ**

ທະນາຄານແຫ່ງ ສປປ ລາວ ກົມຄຸ້ມຄອງສະຖາບັນການເງິນ

ດຣ. ອາຄົມ ປຣະເສີດ

- ການສາມັນ ເພື່ອຊາບ
20/6/2017
M. Naممم

ຮັບຊາບ
21.6.17

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 09 /ກຄສງ
ນະຄອນຫຼວງວຽງຈັນ, ວັນທີ 16 ມິຖຸນາ 2017.

# ຂໍ້ຕົກລົງ
## ວ່າດ້ວຍການແບ່ງຄວາມຮັບຜິດຊອບ
## ຂອງ ຄະນະກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງສະຖາບັນການເງິນ ສະບັບເລກທີ 1041/ທຫລ, ລົງວັນທີ 25/11/2016;
- ອີງຕາມ ການຕົກລົງເຫັນດີເປັນເອກະພາບ ໃນກອງປະຊຸມຄະນະກົມ, ຄັ້ງວັນທີ 02/06/2017.

## ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ ຕົກລົງ:

**ມາດຕາ 1 ແບ່ງໜ້າທີ່ແລະ ຄວາມຮັບຜິດຊອບພາຍໃນຄະນະກົມຄຸ້ມຄອງສະຖາບັນການເງິນ ດັ່ງນີ້:**

1. **ທ່ານ ປອ. ອາຄົມ ປຣະເສີດ ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ:** ເປັນຜູ້ຮັບຜິດຊອບຊີ້ນຳ-ນຳພາການເຄື່ອນໄຫວວຽກງານທັງໝົດຂອງກົມ, ພ້ອມທັງຮັບຜິດຊອບຕໍ່ຄະນະຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງໃນການຊີ້ນຳ-ນຳພາຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງກົມ ແລະ ຊີ້ນຳວຽກງານພະແນກ ວິເຄາະຄວາມສ່ຽງສະຖາບັນການເງິນ ແລະ ພະແນກ ກວດກາສະຖາບັນການເງິນ. ລົງເລິກວຽກງານການເມືອງແນວຄິດ, ຊີ້ນຳວຽກງານອົງການຈັດຕັ້ງມະຫາຊົນຂອງກົມ.
2. **ທ່ານ ວິໄລມິດ ອັກຄະວົງ ຮອງຫົວໜ້າກົມຄຸ້ມຄອງສະຖາບັນການເງິນ:** ຊ່ວຍຫົວໜ້າກົມຮັບຜິດຊອບລົງເລິກຊີ້ນຳວຽກງານ ພະແນກ ນິຕິກຳ ແລະ ພະແນກ ຄົ້ນຄວ້າສ້າງຕັ້ງ ແລະ ວຽກອື່ນໆ ຕາມການມອບໝາຍຂອງ ຫົວໜ້າກົມ.
3. **ທ່ານ ພັນທະບູນ ໄຊຍະເພັດ ຮອງຫົວໜ້າກົມຄຸ້ມຄອງສະຖາບັນການເງິນ:** ຊ່ວຍວຽກຫົວໜ້າກົມຮັບຜິດຊອບລົງເລິກຊີ້ນຳວຽກງານ ພະແນກ ຄຸ້ມຄອງໂຄງການ ແລະ ວຽກອື່ນໆ ຕາມການມອບໝາຍຂອງຫົວໜ້າກົມ.

**ມາດຕາ 2 ການພົວພັນ-ແກ້ໄຂວຽກງານ.**

1. ຮອງຫົວໜ້າກົມ ທີ່ຊີ້ນຳວຽກງານວິຊາສະເພາະທີ່ກຳນົດໃວ້ໃນມາດຕາ 1ຂ້າງເທິງ ຕ້ອງຊີ້-ນຳພາຢ່າງແທດເຖິງ ແລະ ມີຄວາມຮັບຜິດຊອບໂດຍກົງຕໍ່ ຫົວໜ້າກົມ;
2. ທຸກວຽກງານ ແລະ ເອກະສານຕ່າງໆ ທີ່ຈະນຳສະເໜີ ຫົວໜ້າກົມ ຕ້ອງໄດ້ຜ່ານການຄົ້ນຄວ້າ ແລະ ມີຄຳເຫັນຈາກ ຮອງຫົວໜ້າກົມ ຜູ້ຊ່ວຍຊີ້ນຳລົງເລິກຕາມການແບ່ງຄວາມຮັບຜິດຊອບຂ້າງເທິງ;

3. ທຸກວຽກງານ ແລະ ເອກະສານຂາເຂົ້າ-ຂາອອກຂອງກົມ ຕ້ອງໄດ້ຜ່ານຫົວໜ້າກົມ ເພື່ອຊີ້ນໍາໄປຫາ ຮອງຫົວໜ້າກົມຜູ້ທີ່ຊີ້ນໍາວຽກງານດັ່ງກ່າວ ມີຄວາມເຫັນຊີ້ນໍາພະແນກກ່ຽວຂ້ອງຄົ້ນຄວ້າ ແລະ ລາຍງານຄືນໃຫ້ຮອງຫົວໜ້າກົມຜູ້ຊີ້ນໍາ ເພື່ອສະເໜີໃຫ້ຫົວໜ້າກົມພິຈາລະນາ;

4. ວຽກງານປະຈໍາວັນ ແລະ ບັນຫາຕ່າງໆທີ່ຢູ່ໃນແຜນການຂອງກົມ ທີ່ໄດ້ຕົກລົງເປັນເອກະພາບກັນແລ້ວແມ່ນໃຫ້ສະເໜີຫາ ຮອງຫົວໜ້າກົມ ທີ່ຮັບຜິດຊອບວຽກງານນັ້ນ ແກ້ໄຂໂດຍກົງ;

5. ວຽກງານໃດໜຶ່ງທີ່ຫົວໜ້າກົມໄດ້ມອບໃຫ້ພະແນກ ຫຼື ບຸກຄົນກ່ຽວຂ້ອງປະຕິບັດ ໃຫ້ລາຍງານໃຫ້ຫົວໜ້າກົມໂດຍກົງ. ຈາກນັ້ນ ໃຫ້ລາຍງານວຽກທີ່ຫົວໜ້າກົມໃຫ້ ຮອງຫົວໜ້າຜູ້ຊີ້ນໍາຮັບຊາບ;

6. ການພິຈາລະນາ ແລະ ຕັດສິນບັນຫາສໍາຄັນຍຸດທະສາດຂອງກົມ ຕ້ອງໄດ້ຜ່ານການປຶກສາຫາລືພາຍໃນຄະນະກົມ ເພື່ອຄວາມເປັນເອກະພາບກ່ອນຈະຈັດຕັ້ງປະຕິບັດ;

7. ໃນກໍລະນີ ຫົວໜ້າກົມ ຫາກຕິດຂັດວຽກງານ ຫຼື ບໍ່ສາມາດປະຈໍາການໄດ້, ຈະມອບໃຫ້ຮອງຫົວໜ້າກົມ ທ່ານໃດໜຶ່ງປະຕິບັດໜ້າທີ່ແທນ ຕ້ອງລາຍງານວຽກງານທີ່ຕົນໄດ້ຊີ້ນໍາ-ແກ້ໄຂນັ້ນ ໃຫ້ ຫົວໜ້າກົມ ຮັບຊາບ.

**ມາດຕາ 3** ບັນດາພະແນກ, ພະນັກງານ ພ້ອມດ້ວຍຄະນະກົມຄຸ້ມຄອງສະຖາບັນການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງ ສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງວັນລົງລາຍເຊັນເປັນຕົ້ນໄປ. ທຸກການຈັດຕັ້ງເຄື່ອນໄຫວວຽກງານໃນເມື່ອກ່ອນ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ອນແຕ່ຖືກຍົກເລີກ.

**ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ**

ດຣ. ອາຄົມ ປຣະເສີດ